1601
22/11/13

ສັນຕິບ

ນາຍົກລັດຖະມົນຕີ

ເລກທີ 31/ນຍ

ນະຄອນຫຼວງວຽງຈັນ, ວັນທີ 5.11-2013

ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ຫ້ອງການ
ເລກທີ 5737/ກຊສ
ວັນທີ 8.11.13
ສົ່ງເຖິງ

# ຄຳສັ່ງ
## ວ່າດ້ວຍການຢຸດຕິຊົ່ວຄາວ ການຂຸດຄົ້ນໄມ້ໃນເຂດປ່າຜະລິດ

ເຖິງ: - ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ
- ບັນດາທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງໃນທົ່ວປະເທດ.
- ທ່ານ ປະທານສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ເລກທີ 02/ສພຊ, ວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ເລກທີ 06/ສພຊ, ວັນທີ 24 ທັນວາ 2007;
- ອີງຕາມມະຕິກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນພຶດສະພາ 2013 ເລກທີ 06/ລບ, ລົງວັນທີ 21 ມິຖຸນາ 2013;
- ອີງຕາມໜັງສືສະເໜີຂອງ ກະຊວງກະສິກຳ ແລະປ່າໄມ້ ເລກທີ 063/ກປ, ລົງວັນທີ 11 ຕຸລາ 2013.

ໃນໄລຍະຜ່ານມາ, ພັກ ແລະ ລັດຖະບານ ໄດ້ເອົາໃຈໃສ່ຊີ້ນຳຢ່າງຈິດຈໍ່ຕໍ່ວຽກງານການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ໂດຍໄດ້ອອກກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຫຼາຍສະບັບ ເພື່ອເປັນບ່ອນອີງໃນການປະຕິບັດ, ໄດ້ສ້າງຕັ້ງປ່າຜະລິດແຫ່ງຊາດ 51 ເຂດ ໃນທົ່ວປະເທດ. ຍ້ອນແນວນັ້ນ, ຈຶ່ງເຮັດໃຫ້ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ດີຂຶ້ນກວ່າເດີມ, ຂະບວນການປູກໄມ້ຂອງປະຊາຊົນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ກໍຂະຫຍາຍຕົວຢ່າງວ່ອງໄວ ໂດຍສະເພາະໄມ້ອຸດສາຫະກຳ ເຊັ່ນ: ຢາງພາລາ, ໄມ້ວິກ, ໄມ້ສັກ ແລະ ອື່ນໆ, ນອກນັ້ນ ການປະສານງານ ແລະ ການແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ແລະ ທ້ອງຖິ່ນ ກໍມີຄວາມຄ່ອງຕົວດີຂຶ້ນເປັນກ້າວໆມາ.

ແຕ່ຄຽງຄູ່ກັນນັ້ນ ກໍຍັງສັງເກດເຫັນວ່າ: ຍັງມີຫຼາຍຂະແໜງການ ແລະ ທ້ອງຖິ່ນຍັງບໍ່ທັນເປັນເຈົ້າການປະຕິບັດໜ້າທີ່ຕາມຄວາມຮັບຜິດຊອບຂອງຕົນ, ຂາດຄວາມເປັນເອກະພາບ ແລະ ບໍ່ເຂັ້ມງວດໃນການປະຕິບັດລະບຽບກົດໝາຍ ອັນເປັນຕົ້ນເຫດໃຫ້ເກີດມີປະກົດການຫຍໍ້ທໍ້ດ້ານປ່າໄມ້ແຜ່ລາມຢ່າງກວ້າງຂວາງ.

ເພື່ອຮັກສາປ່າໄມ້ທຳມະຊາດ, ຮັກສາຄວາມຊຸ່ມຊື່ນ ໃຫ້ເປັນແຫຼ່ງເກັບນ້ຳ ປະຕິບັດຍຸດທະສາດສ້າງເຂື່ອນໄຟຟ້ານ້ຳຕົກ, ການທ່ອງທ່ຽວນິເວດ ທັງເປັນການຫັນປ່ຽນຈິນຕະນາການໃນການຊົມໃຊ້ໄມ້ທຳມະຊາດ ໄປສູ່ການນຳໃຊ້ດ້ວຍການປູກ, ແນໃສ່ບັນລຸຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1) ໃຫ້ຢຸດຕິຊົ່ວຄາວ ການຂຸດຄົ້ນໄມ້ໃນເຂດປ່າຜະລິດ ໃນທົ່ວປະເທດ ເລີ່ມແຕ່ສົກປີ 2013-2014 ເປັນຕົ້ນໄປ. ລັດຖະບານ ບໍ່ອະນຸຍາດ ໃຫ້ບັນດາກະຊວງ, ອົງການຈັດຕັ້ງ ແລະ ແຂວງຕ່າງໆ ສະເໜີ ແລະ ອອກອະນຸຍາດຂຸດຄົ້ນ ແລະ ເກັບກູ້ໄມ້ ຢູ່ໃນປ່າຜະລິດ ເພື່ອເປັນທຶນຊຳລະໂຄງການກໍ່ສ້າງພື້ນຖານໂຄງ

ລ່າງຕ່າງໆ ຢ່າງເດັດຂາດ;

2) ໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບ ອົງການປົກຄອງທ້ອງຖິ່ນ ດຳເນີນການສຳຫຼວດ ແລະ ສ້າງແຜນຈັດສັນປ່າຜະລິດ ຕາມລະບົບຈັດສັນປ່າໄມ້ແບບຍືນນານ ໃຫ້ສຳເລັດໃນທ້າຍປີ 2015, ພາຍຫຼັງສ້າງແຜນຈັດສັນສຳເລັດທັງໝົດໃນທົ່ວປະເທດແລ້ວ ໃຫ້ສັງລວມລາຍງານຕໍ່ລັດຖະບານ ເພື່ອພິຈາລະນາ ແລະ ອະນຸມັດແຜນການຂຸດຄົ້ນໄມ້ ໃນຂັ້ນຕໍ່ໄປ. ໃນຊ່ວງດຳເນີນການສຳຫຼວດ ແລະ ສ້າງແຜນຈັດສັນປ່າຜະລິດນີ້ ແມ່ນໃຫ້ປະຕິບັດ ດັ່ງນີ້:

2.1. ການຂຸດຄົ້ນໄມ້ໃນເຂດໂຄງການຕ່າງໆ ທີ່ລັດຖະບານ ໄດ້ອະນຸຍາດ ຫຼື ມີສັນຍາກັບນັກລົງທຶນໄປກ່ອນແລ້ວນັ້ນ ແມ່ນໃຫ້ປະຕິບັດຕາມເງື່ອນໄຂຂອງສັນຍາດັ່ງກ່າວ ບົນພື້ນຖານມີການຄຸ້ມຄອງຢ່າງເຂັ້ມງວດ;

2.2. ສຳລັບເຂດປ່າຜະລິດໃດ ຫາກໄດ້ມີການສຳຫຼວດ ແລະ ສ້າງແຜນຈັດສັນສຳເລັດແລ້ວ ກໍໃຫ້ເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຕາມລະບຽບຢ່າງເຂັ້ມງວດ;

2.3. ບໍ່ອະນຸຍາດໃຫ້ມີການຫັນປ່ຽນ ເນື້ອທີ່ປ່າຜະລິດ ໄປເປັນເນື້ອທີ່ດິນປະເພດອື່ນຢ່າງເດັດຂາດ;

2.4. ສຳລັບການນຳໃຊ້ໄມ້ເພື່ອຄອບຄົວຂອງປະຊາຊົນທີ່ນອນໃນເຂດປ່າຜະລິດ ແລະ ອ້ອມຂ້າງປ່າຜະລິດ ແມ່ນໃຫ້ປະຕິບັດຕາມມາດຕາ 41 ຂອງກົດໝາຍວ່າດ້ວຍປ່າໄມ້ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.

3) ໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ ຮີບຮ້ອນດຳເນີນການສຳຫຼວດ ແລະ ກຳນົດປະເພດ ຂອງເນື້ອທີ່ປ່າໄມ້ທີ່ບໍ່ນອນໃນເຂດ 3 ປະເພດປ່າ ໃຫ້ສຳເລັດ ໄປຄວບຄູ່ກັບການສ້າງແຜນຄຸ້ມຄອງ ແລະ ນຳໃຊ້ຕາມທິດຍືນຍົງ ດ້ວຍການອອກນິຕິກຳ ແລະ ກົນໄກຄຸ້ມຄອງຕ່າງໆໃຫ້ຮັດກຸມ;

4) ໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຄຸ້ມຄອງໂຮງງານປຸງແຕ່ງໄມ້ ໃຫ້ເຂັ້ມງວດ ໂດຍມີການສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ ດຳເນີນການດັດສົມໂຮງງານປຸງແຕ່ງໄມ້ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດໃນປີ 2015 ແລະ ບໍ່ໃຫ້ອະນຸຍາດສ້າງຕັ້ງໂຮງງານໃກ້ກັບ 3 ປະເພດປ່າຢ່າງເດັດຂາດ;

5) ໃຫ້ ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພີ່ມທະວີຄວາມເອົາໃຈໃສ່ໃນການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ກ່ຽວກັບການຄຸ້ມຄອງປ່າໄມ້ ດ້ວຍການໂຄສະນາເຜີຍແຜ່, ສຶກສາອົບຮົມ ແລະ ນຳໃຊ້ ໄປຄວບຄູ່ກັບການນຳໃຊ້ມາດຕະການເຂັ້ມງວດຕາມກົດໝາຍກ່ຽວຂ້ອງໄດ້ກຳນົດໄວ້;

6) ໃຫ້ ບັນດາລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ປະທານແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງ ຄົ້ນຄວ້າກຳແໜ້ນ ເນື້ອໃນຄຳສັ່ງສະບັບນີ້, ທັງເປັນເຈົ້າການຜັນຂະຫຍາຍເປັນອັນລະອຽດ ໂດຍໄວ ແລະ ຊີ້ນຳການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

7) ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຄຳສັ່ງປ່ຽນແປງໃໝ່.

ນາຍົກລັດຖະມົນຕີ